ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0541 /ກງ
ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2022

# ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດໍາເນີນທຸລະກິດການຄ້າທາງເອເລັກໂຕຣນິກ
ເລື່ອງ: ການປະຕິບັດພັນທະອາກອນຈາກການຄ້າທາງເອເລັກໂຕຣນິກ ແລະ ບໍລິການດິຈິຕອນແພັລດຟອມ ຢູ່ ສປປລາວ

- ອີງຕາມ ກົດໝາຍວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍ ອາກອນມູນຄ່າເພີ່ມ (ສະບັບປັບປຸງ) ເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍ ອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;
- ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງ ຫາ 2021
- ອີງຕາມ ດໍາລັດວ່າດ້ວຍ ເລກປະຈໍາຕົວຜູ້ເສຍອາກອນ ສະບັບເລກທີ 354/ນຍ ລົງວັນທີ 05 ຕຸລາ 2007;
- ອີງຕາມ ດໍາລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ເລກທີ 327/ລບ, ລົງວັນທີ 16 ກັນຍາ 2014;
- ອີງຕາມ ດໍາລັດວ່າດ້ວຍ ການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021;
- ອີງຕາມ ດໍາລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021.

ຈຸດປະສົງ ເພື່ອຜັນຂະຫຍາຍດໍາລັດວ່າດ້ວຍ ການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021, ແນໃສ່ເພື່ອຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ສົ່ງເສີມການຊົມໃຊ້ສິນຄ້າ ແລະ ບໍລິການທາງເອເລັກໂຕຣນິກ ໃຫ້ກວ້າງຂວາງ ເປັນເອກະພາບ ແລະ ການປະຕິບັດພັນທະສ່ວຍສາອາກອນ ຂອງຜູ້ດໍາເນີນການຄ້າທາງເອເລັກໂຕຣນິກນິກ ແລະ ບໍລິການດິຈິຕອນແພັລດຟອມ ຢູ່ ສປປ ລາວ.

## ລັດຖະມົນຕີກະຊວງການເງິນ ອອກແຈ້ງການດັ່ງນີ້:

1. ນິຕິບຸກຄົນພາຍໃນປະເທດ
   1) ນິຕິບຸກຄົນ ທີ່ເຄື່ອນໄຫວ ຫລື ດໍາເນີນທຸລະກິດ ຜ່ານຊ່ອງທາງ: (1) ການຄ້າເອເລັກໂຕຣນິກຂອງຕົນເອງ, (2)ການຄ້າໃນຕະຫລາດເອເລັກໂຕຣນິກ ແລະ (3)ການໃຫ້ບໍລິການຕະຫລາດເອເລັກໂຕຣນິກ ຕາມພາກທີ II ມາດຕາ 6 ຮູບແບບການຄ້າທາງເອເລັກໂຕຣນິກ ຂອງດໍາລັດວ່າດ້ວຍ ການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021 ເຊັ່ນ: DroppinX, Olaa, Sokxay All, Ebuylaos (ສໍາລັບກໍານົດ

ຫົວໜ່ວຍການຄ້າເອເລັກໂຕຣນິກແບບລະອຽດ ແມ່ນປະຕິບັດຕາມນິຕິກຳຂອງຂະແໜງອຸດສາຫະກຳ ແລະ ການຄ້າ) ມີລາຍຮັບປະຈຳປີຫລາຍກວ່າ 400 ລ້ານກີບຂຶ້ນໄປ ຕ້ອງເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ແລະ ປະຕິບັດພັນທະອາກອນຕາມກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງຢ່າງຄົບຖ້ວນ;

2) ຕ້ອງສະແດງເລກປະຈຳຕົວຜູ້ເສຍອາກອນ ໃນການໂຄສະນາຂາຍສິນຄ້າ ແລະ ບໍລິການ ຜ່ານຊ່ອງທາງການຄ້າເອເລັກໂຕຣນິກຂອງຕົນເອງ, ການຄ້າໃນຕະຫລາດເອເລັກໂຕຣນິກ ແລະ ການໃຫ້ບໍລິການຕະຫລາດເອເລັກໂຕຣນິກ (ກໍລະນີບໍ່ມີເລກປະຈຳຕົວຜູ້ເສຍອາກອນ ຕ້ອງໄດ້ຂຶ້ນທະບຽນເລກປະຈຳຕົວຜູ້ເສຍອາກອນໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ);

3) ການຄ້າເອເລັກໂຕຣນິກ ແລະ ບໍລິການດີຈິຕອນແພັລດຟອມທຸກຮູບແບບ ຕ້ອງອອກໃບເກັບເງິນທຸກຄັ້ງ ຕາມປະເພດ ແລະ ແບບທີ່ກຳນົດໄວ້ໃນດຳລັດວ່າດ້ວຍໃບເກັບເງິນ;

4) ແຈ້ງມອບອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ວິສາຫະກິດ (ອາກອນກຳໄລ) ດ້ວຍຕົນເອງຜ່ານ taxservice.mof.gov.la ຕາມແບບຟອມທີ່ກຳນົດໃນລະບົບ;

5) ມີໜ້າທີ່ຄິດໄລ່, ເກັບ ແລະ ຫັກອາກອນລາຍໄດ້ຈາກບຸກຄົນທີ່ມີພູມລຳເນົາ ແລະ ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ຈາກເງິນເດືອນ, ຄ່າຈ້າງ ຫລື ຄ່າແຮງງານ, ລາຍໄດ້ຂອງຜູ້ປະກອບອາຊີບອິດສະຫຼະທີ່ບໍ່ໄດ້ຂຶ້ນທະບຽນວິສາຫະກິດ ເປັນຕົ້ນ ຄ່ານາຍໜ້າ, ຄ່າທີ່ປຶກສາ, ການບໍລິການ, ການເຄື່ອນໄຫວກິດຈະກຳກິລາ, ການສະແດງ ຫລື ບຸກຄົນອື່ນໆ ທີ່ສະໜັບສະໜູນ, ກິດຈະກຳສົ່ງເສີມການຕະຫລາດ, ໂຄສະນາ ແລະ ຂົນສົ່ງສິນຄ້າ ຜ່ານຊ່ອງທາງການຄ້າເອເລັກໂຕຣນິກ ແລະ ບໍລິການດີຈິຕອນແພັລດຟອມ ຕາມໝວດທີ 01 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ແລ້ວແຈ້ງມອບດ້ວຍຕົນເອງຜ່ານ taxservice.mof.gov.la ຕາມແບບຟອມທີ່ກຳນົດໃນລະບົບ ເຂົ້າງົບປະມານແຫ່ງລັດຕາມກົດໝາຍກຳນົດ;

6) ສະໜອງຂໍ້ມູນການຄ້າເອເລັກໂຕຣນິກ ແລະ ຂໍ້ມູນບໍລິການດີຈິຕອນແພັລດຟອມ, ໃຫ້ການເຊື່ອມຕໍ່ຂໍ້ມູນທາງເອເລັກໂຕຣນິກຂອງຕົນ ກັບລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ TaxRIS ຕາມຄວາມຕ້ອງການຂອງຂະແໜງສ່ວຍສາອາກອນ.

**2. ນິຕິບຸກຄົນຕ່າງປະເທດ**

1) ນິຕິບຸກຄົນ ທີ່ບໍ່ໄດ້ສ້າງຕັ້ງ ຫລື ຂຶ້ນທະບຽນວິສາຫະກິດຢູ່ ສປປ ລາວ ສະໜອງການໃຫ້ບໍລິການຕະຫລາດເອເລັກໂຕຣນິກ ແລະ ບໍລິການດີຈິຕອນແພັລດຟອມ ໃຫ້ຜູ້ຊົມໃຊ້ພາຍໃນປະເທດ(ຕະຫລາດ ສປປລາວ) ເປັນຕົ້ນ:

- ໃຫ້ບໍລິການເບິ່ງໜັງ, ເພງອອນລາຍ, ເກມ ແລະ ອັບພລິເຄຊັນຕ່າງໆ ເຊັ່ນ: Youtube, JOOX, TikTok, Humble, Zoom, CODASHOP;
- ໃຫ້ບໍລິການສະຕຣີມມິງ Streaming ເຊັ່ນ: NETFLIX, Apple TV+, Disney+
- ໃຫ້ບໍລິການລົງໂຄສະນາ, ສື່ໂຄສະນາ ເຊັ່ນ: Facebook, Google;
- ໃຫ້ບໍລິການຈອງໂຮງແຮມ, ທີ່ພັກ, ການເດີນທາງ ເຊັ່ນ: agoda, Booking.com, airbnb;
- ໃຫ້ບໍລິການເປັນຜູ້ເຊື່ອມຕໍ່ລະຫວ່າງຜູ້ຊື້ ແລະ ຜູ້ຂາຍ ເຊັ່ນ: Shopee, Lazada;

2) ມີລາຍຮັບຈາກຜູ້ຊົມໃຊ້ພາຍໃນປະເທດຫລາຍກວ່າ 400 ລ້ານກີບຕໍ່ປີ ຕ້ອງເຂົ້າສູ່ລະບົບອາກອນມູນຄ່າເພີ່ມຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມກຳນົດ;

3) ຕ້ອງຂຶ້ນທະບຽນຂໍເລກປະຈຳຕົວອາກອນມູນຄ່າເພີ່ມ 12 ຕົວເລກດ້ວຍຕົນເອງຢ່າງເປັນທາງການ ຜ່ານທາງເວັບໄຊສ taxservice.mof.gov.la ເພື່ອໃຫ້ບໍລິການທາງເອເລັກໂຕຣນິກຢູ່ ສປປ ລາວ (ເອກະສານປະກອບ ແລະ ຄຳແນະນຳຈະກຳນົດໃນເວັບໄຊ);

4) ຄິດໄລ່ ແລະ ເກັບອາກອນມູນຄ່າເພີ່ມຢູ່ໃນລາຄາຂາຍ ສິນຄ້າ ແລະ ບໍລິການ ທາງເອເລັກໂຕຣນິກ ຈາກຜູ້ຊົມໃຊ້ຢູ່ ສປປ ລາວ ຕາມກົດໝາຍກຳນົດ ແລ້ວແຈ້ງມອບອາກອນມູນຄ່າເພີ່ມເບື້ອງສົ້ນອອກ VAT Output

ດ້ວຍຕົນເອງຜ່ານ taxservice.mof.gov.la ຕາມແບບຟອມທີ່ກຳນົດໃນລະບົບ ໂດຍບໍ່ໃຫ້ຫັກອາກອນມູນຄ່າເພີ່ມເບື້ອງສິນເຂົ້າ VAT Input;

5) ຄິດໄລ່ອາກອນກຳໄລຈາກລາຍຮັບທີ່ເກີດຂຶ້ນຢູ່ ສປປ ລາວ ຕາມລະບຽບການຂອງ (OECD Regulation on E-Commerce and Digital Service Tax ທີ່ໄດ້ຮັບຮອງໃນແຕ່ລະໄລຍະ) ແລ້ວແຈ້ງມອບອາກອນກຳໄລດັ່ງກ່າວດ້ວຍຕົນເອງຜ່ານທາງ ເວັບໄຊສ: taxservice.mof.gov.la ຕາມແບບຟອມທີ່ກຳນົດໃນລະບົບ;

6) ມີພັນທະຄິດໄລ່ຫັກອາກອນລາຍໄດ້ Withholding Tax ກ່ອນເບີກຈ່າຍເງິນໃຫ້ບຸກຄົນທີ່ມີພູມລຳເນົາຢູ່ ສປປລາວ ຈາກລາຍໄດ້ທີ່ເກີດຂຶ້ນຜ່ານຊ່ອງທາງດຳເນີນທຸລະກິດເອເລັກໂຕຣນິກ ແລະ ບໍລິການດີຈີຕອນແພັລດຟອມ ຂອງຕົນ ແລ້ວແຈ້ງມອບອາກອນດັ່ງກ່າວດ້ວຍຕົນເອງຜ່ານຊ່ອງທາງ taxservice.mof.gov.la ໂດຍຄັດຕິດຂໍ້ມູນການຊຳລະຜ່ານລະບົບທະນາຄານໃຫ້ບຸກຄົນ (Tansaction Information) ຕາມແບບຟອມທີ່ກຳນົດໃນລະບົບ;

7) ໄລຍະການແຈ້ງມອບອາກອນຕາມຂໍ້ທີ 4, 5, 6 ຂ້າງເທິງ ແມ່ນໃຫ້ແຈ້ງ 02 ຄັ້ງຕໍ່ປີ ຄື: ກ່ອນວັນທີ 20 ກໍລະກົດ ແລະ ກ່ອນວັນທີ 20 ມັງກອນ ຂອງທຸກປີ (ສຳລັບວິທີການແຈ້ງມອບຈະແນະນຳເພີ່ມເຕີມຢູ່: taxservice.mof.gov.la);

8) ສະໜອງຂໍ້ມູນການຄ້າເອເລັກໂຕຣນິກ ແລະ ຂໍ້ມູນບໍລິການດີຈີຕອນແພັລດຟອມ, ໃຫ້ການເຊື່ອມຕໍ່ຂໍ້ມູນທາງເອເລັກໂຕຣນິກຂອງຕົນ ກັບລະບົບຄຸ້ມຄອງຂໍ້ມູນລາຍຮັບສ່ວຍສາອາກອນ TaxRIS ຕາມຄວາມຕ້ອງການຂອງຂະແໜງສ່ວຍສາອາກອນ.

**3. ບຸກຄົນ ຜູ້ມີພູມລຳເນົາ ແລະ ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ**

1) ບຸກຄົນ ຜູ້ມີພູມລຳເນົາ ແລະ ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ມີລາຍໄດ້ຈາກການຄ້າທາງເອເລັກໂຕຣນິກ ແລະ ບໍລິການດີຈີຕອນແພັລດຟອມ ຢູ່ ສປປ ລາວ ຕ້ອງຂໍເລກປະຈຳຕົວຜູ້ເສຍອາກອນບຸກຄົນນຳຂະແໜງສ່ວຍສາອາກອນ ຫລື ຜ່ານເອັບພຣິເຄຊັນ PTIN ເພື່ອນຳໃຊ້ໃນການແຈ້ງມອບພັນທະອາກອນຂອງຕົນ;

2) ລາຍໄດ້ຈາກການຊື້ຂາຍອອນລາຍ ຫລື ລາຍໄດ້ຂອງບຸກຄົນຜູ້ມີພູມລຳເນົາ ຜ່ານຊ່ອງທາງການຄ້າເອເລັກໂຕຣນິກຂອງຕົນເອງ, ການຄ້າໃນຕະຫລາດເອເລັກໂຕຣນິກ ແລະ ການໃຫ້ບໍລິການຕະຫລາດເອເລັກໂຕຣນິກແມ່ນລາຍໄດ້ຕ້ອງຖືກເສຍອາກອນ ໃນອັດຕາ 2% ຂອງລາຍໄດ້ທັງໝົດ (ໂດຍບໍ່ອະນຸຍາດໃຫ້ຫັກຕົ້ນທຶນ ຫລື ຄ່າໃຊ້ຈ່າຍໃດໆອອກກ່ອນການຄິດໄລ່ອາກອນ) ຕາມມາດຕາ 34 ຂໍ້ 3, 39 ຂໍ້ 3 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;

3) ການແຈ້ງ - ມອບອາກອນ:

- ສຳລັບຜູ້ທີ່ດຳເນີນການຄ້າເອເລັກໂຕຣນິກຢ່າງເປັນປົກກະຕິ ໃຫ້ແຈ້ງເສຍອາກອນລາຍໄດ້ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ຕາມມາດຕາ 25 ຂອງກົດໝາຍວ່າດ້ວຍຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ສຳລັບຜູ້ທີ່ດຳເນີນການຄ້າເອເລັກໂຕຣນິກຢ່າງເປັນຄັ້ງຄາວ ໃຫ້ແຈ້ງເສຍອາກອນລາຍໄດ້ ໃຫ້ແຈ້ງເສຍອາກອນລາຍໄດ້ພາຍໃນກຳນົດ 15 ວັນ ລັດຖະການ ນັບແຕ່ມື້ມີລາຍຮັບເກີດຂຶ້ນເປັນຕົ້ນໄປຕາມມາດຕາ 32 ຂອງກົດໝາຍວ່າດ້ວຍຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019.

**4. ສິດ ແລະ ໜ້າທີ່ຂອງຂະແໜງສ່ວຍສາອາກອນແຕ່ລະຂັ້ນ**

- ອຳນວຍຄວາມສະດວກໃນການອອກເລກປະຈຳຕົວຜູ້ເສຍອາກອນ ນຳເອົາຂໍ້ມູນບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ເຂົ້າລະບົບຄຸ້ມຄອງລາຍຮັບສ່ວຍສາອາກອນ TaxRIS ໃຫ້ຄົບຖ້ວນ;

- ເຜີຍແຜ່ດຳລັດວ່າດ້ວຍການຄ້າເອເລັກໂຕຣນິກ ແລະ ນິຕິກຳ ສ່ວຍສາອາກອນທີ່ກ່ຽວຂ້ອງກັບການປະຕິບັດພັນທະອາກອນຈາກການຄ້າ ແລະ ລາຍໄດ້ທາງເອເລັກໂຕຣນິກໃຫ້ກວ້າງຂວາງ;
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ສະມາຄົມການຄ້າເອເລັກໂຕຣນິກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄ້າເອເລັກໂຕຣນິກ ແລະ ນິຕິກຳ ສ່ວຍສາອາກອນ;
- ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການປະຕິບັດພັນທະອາກອນປະເພດຕ່າງໆ ທີ່ຢູ່ໃນລະບົບຄຸ້ມຄອງຂໍ້ມູນ-ຂ່າວສານລາຍຮັບສ່ວຍສາອາກອນ TaxRIS, ການເຄື່ອນໄຫວທຸລະກິດ, ການສົ່ງເສີມການຂາຍ, ການໂຄສະນາປະຊາສຳພັນຂາຍສິນຄ້າ ຂອງບຸກຄົນ, ນິຕິບຸກຄົນ ຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນເອງ ແລະ ບໍລິການດິຈິຕອນແພັລດຟອມ ຫລື ລາຍງານຂັ້ນເທິງຖັດໄປ ກໍລະນີທີ່ຕ້ອງການຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ;
- ປະສານເອົາຂໍ້ມູນການຊຳລະຜ່ານລະບົບທະນາຄານ ຈາກຜູ້ໃຫ້ບໍລິການຊຳລະພາຍໃນປະເທດ ແລະ ຕາງໜ້າລັດຖະບານໃນການແລກປ່ຽນຂໍ້ມູນຜູ້ເສຍອາກອນລະຫວ່າງປະເທດ ນຳບັນດາປະເທດສົນທິສັນຍາສອງຝ່າຍ, ຫລາຍຝ່າຍ ຕາມກົດໝາຍ ແລະ ສົນທິສັນຍາກຳນົດ ນຳໃຊ້ຂໍ້ມູນເພື່ອຈຸດປະສົງໃນການຈັດຕັ້ງປະຕິບັດຄຸ້ມຄອງເກັບລາຍຮັບ.

**5. ມາດຕະການຕໍ່ຜູ້ລະເມີດ**

ມາດຕະການຕໍ່ຜູ້ທີ່ບໍ່ປະຕິບັດພັນທະອາກອນ ຫລື ພັນທະອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍກ່ຽວກັບກັບສ່ວຍສາອາກອນ ດັ່ງນີ້:

1) ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແລະ ດຳເນີນຄະດີຕາມລະບຽບກົດໝາຍກຳນົດ;
2) ສະເໜີໂຈະຊົ່ວຄາວ ຫລື ຍົກເລີກ ໃບຢັ້ງຢືນມາດຕະຖານດ້ານເຕັກນິກຂອງຊ່ອງທາງການຄ້າເອເລັກໂຕຣນິກ;
3) ສະເໜີໂຈະຊົ່ວຄາວ ຫລື ຍົກເລີກ ຊ່ອງທາງການຊຳລະຂອງຜູ້ໃຫ້ບໍລິການຊຳລະ;
4) ສະເໜີໂຈະຊົ່ວຄາວ ຫລື ຍົກເລີກ ການເຜີຍແຜ່ ແລະ ຊ່ອງທາງການດຳເນີນທຸລະກິດເອເລັກໂຕຣນິກ ແລະ ບໍລິການດິຈິຕອນແພັລດຟອມທຸກຮູບແບບ;
5) ສະເໜີໂຈະຊົ່ວຄາວ ຫລື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ.

**6. ຜົນສັກສິດ**

ແຈ້ງການສະບັບນີ້ມີຜົນສັກສິດຈັດຕັ້ງປະຕິບັດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີນິຕິກຳແນະນຳລະອຽດເພີ່ມເຕີມ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ